ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

2865

ເລກທີ.............../ກປ

ນະຄອນຫຼວງວຽງຈັນ, ວັນທີ 10 SEP 2014

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຜະລິດ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກຳ

- ອີງຕາມກົດໝາຍວ່າດ້ວຍສະຖິຕິ ເລກທີ 03/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍສະຖິຕິ ເລກທີ 475/ລບ,ລົງວັນທີ 18 ຕຸລາ2012;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ກະຊວງກະສິກຳ ແລະປ່າໄມ້
- ອີງຕາມໜັງສືສະເໜີຂອງກົມແຜນການ ແລະການຮ່ວມມື ເລກທີ 4520/ກຜຮ, ລົງວັນທີ 03/09/2014

## ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການການຜະລິດ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກຳ ເພື່ອສ້າງ, ປັບປຸງ ແລະ ຍົກລະດັບຄຸນນະພາບຂອງສະຖິຕິກະສິກຳ ແຕ່ສູນກາງ ຮອດທ້ອງຖິ່ນໃຫ້ມີຄວາມເປັນເອກະພາບ, ເຂັ້ມແຂງ ແລະ ມີປະສິດທິພາບ ແນໃສ່ຮັບປະກັນຂໍ້ມູນສະຖິຕິກະສິກຳ ໃຫ້ຖືກຕ້ອງ, ຄົບຖ້ວນ, ຊັດເຈນ, ທັນເວລາ ແລະ ສອດຄ່ອງກັບສະພາບຕົວຈິງທັງຮັບປະກັນການເຊື່ອມ ໂຍງເຂົ້າກັບລະບົບສະຖິຕິແຫ່ງຊາດ ແລະ ສາກົນປະກອບສ່ວນເຂົ້າໃນການສ້າງແຜນພັດທະນາ, ກຳນົດເປັນນະ ໂຍບາຍ ແລະ ແຜນຍຸດທະສາດຂອງຂະແໜງກະສິກຳ ແລະ ປ່າໄມ້.

**ມາດຕາ 2 ສະຖິຕິກະສິກຳ**

ສະຖິຕິກະສິກຳ ແມ່ນຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ, ການລາຍງານບໍລິຫານ ແລະ ການຄົ້ນຄວ້າທົດລອງ ໂດຍຜ່ານຂະບວນການເກັບກຳ, ການສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໄຈ ແລະ ການວິເຄາະ ຕາມຫຼັກວິທະຍາສາດສະຖິຕິກ່ຽວກັບການຜະລິດພືດ, ສັດລ້ຽງ, ປະມົງ, ຊົນລະປະທານ, ປ່າໄມ້, ຜະລິດຕະພັນປ່າໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອເປັນແຫຼ່ງສະໜອງສະຖິຕິທີ່ຊັດເຈນ ແລະ ທັງເປັນໄມ້ຫຼາວັດແທກລະດັບການເໜັງຕີງທາງດ້ານເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ໃນແຕ່ລະໄລຍະ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຜະລິດສະຖິຕິ** ໝາຍເຖິງ ຂະບວນການເກັບກໍາ, ສັງລວມ, ຄິດໄລ່, ວິເຄາະ, ວິໄຈ ແລະ ເຜີຍແຜ່ຂໍ້ມູນສະຖິຕິ ຈາກການສໍາຫຼວດ, ການລາຍງານບໍລິຫານ ແລະ ການຄົ້ນຄວ້າທົດລອງ ຕາມຫຼັກວິທະຍາສາດສະຖິຕິ;

2. **ການສໍາຫຼວດໃຫຍ່** ໝາຍເຖິງ ການສໍາຫຼວດທີ່ກວມເອົາທຸກຫົວໜ່ວຍເປົ້າໝາຍ ຕາມຈຸດປະສົງ ຂອງການສໍາຫຼວດນັ້ນ ໂດຍບໍ່ມີການນໍາໃຊ້ຫຼັກການການຄັດເລືອກຕົວແທນ;

3. **ການສໍາຫຼວດແບບຕົວແທນ** ໝາຍເຖິງ ການສໍາຫຼວດບາງຫົວໜ່ວຍເປົ້າໝາຍທີ່ຜ່ານການຄັດເລືອກຕົວແທນ ຕາມຫຼັກວິທະຍາສາດສະຖິຕິຂອງການອອກແບບຕົວແທນ ຕາມຈຸດປະສົງຂອງການສໍາຫຼວດນັ້ນ ຊຶ່ງສາມາດເປັນຕົວແທນລະດັບຊາດ ຫຼື ລະດັບແຂວງ, ເມືອງ ແລະ ບ້ານ;

4. **ການສໍາຫຼວດສະເພາະ** ໝາຍເຖິງ ການສໍາຫຼວດຂະໜາດນ້ອຍ ໂດຍລົງເລິກສະເພາະຂົງເຂດໃດໜຶ່ງທີ່ມີໃນແຜນ ຫຼື ບໍ່ມີໃນແຜນການສໍາຫຼວດ ຊຶ່ງສາມາດຈັດຕັ້ງໄດ້ທຸກເວລາ ຕາມຄວາມຕ້ອງການເພີ່ມເຕີມ, ຮີບດ່ວນ, ຈໍາເປັນ ແລະ ໃນກໍລະນີທີ່ມີພາວະສຸກເສີນເກີດຂຶ້ນ;

5. **ການລາຍງານຕົວຊີ້ບອກ** ໝາຍເຖິງ ດັດຊະນີໝາຍ ທີ່ຄິດໄລ່ອອກມາເປັນຕົວເລກສະຖິຕິຊຶ່ງສ່ອງ ແສງເຖິງ ຂະໜາດ, ລະດັບການຂະຫຍາຍຕົວຂອງການພັດທະນາ, ໂຄງປະກອບ, ອັດຕາສ່ວນພົວພັນທາງດ້ານເສດຖະກິດ-ສັງຄົມ, ຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມ, ຄວາມໝັ້ນຄົງ ໃນສະຖານທີ່ ແລະ ໄລຍະ ເວລາໃດໜຶ່ງ;

6. **ຂໍ້ມູນດິບ** ໝາຍເຖິງ ຂໍ້ມູນ ຫຼື ຕົວເລກທີ່ໄດ້ມາຈາກການສໍາຫຼວດ ແລະ ການລາຍງານບໍລິຫານທີ່ຍັງບໍ່ທັນໄດ້ຮັບການຜະລິດຢ່າງຄົບຊຸດ ຕາມຫຼັກວິທະຍາສາດສະຖິຕິ;

7. **ການປຸງແຕ່ງສະຖິຕິກະສິກໍາ** ໝາຍເຖິງຂັ້ນຕອນໜຶ່ງຂອງການຜະລິດສະຖິຕິ ກ່ຽວກັບການສຶກສາຄວາມສອດຄ່ອງ ຫຼື ຄວາມເປັນໄປໄດ້ຂອງຂໍ້ມູນ, ການໃສ່ລະຫັດສາລະບານ, ການຈັດລຽງລໍາດັບ, ການຈັດໝວດ, ການຈັດກຸ່ມ ຕາມຫຼັກວິທະຍາສາດສະຖິຕິ;

8. **ຜູ້ສະໜອງຂໍ້ມູນ** ໝາຍເຖິງ ບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ຕັ້ງພູມລໍາເນົາຢູ່ ສປປ ລາວທີ່ໄດ້ສະໜອງຂໍ້ມູນສະຖິຕິ

**ມາດຕາ 4 ຫຼັກການພື້ນຖານຂອງວຽກງານສະຖິຕິກະສິກໍາ**

ການຜະລິດ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກໍາ ຕ້ອງຮັບປະກັນຫຼັກການພື້ນຖານຂອງວຽກງານສະຖິຕິ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບທາງດ້ານເຕັກນິກ, ວິທີການ, ນິຍາມຂອງຂະແໜງກະສິກໍາ ແລະ ປ່າໄມ້ ແຕ່ສູນກາງ ຮອດທ້ອງຖິ່ນ;

2. ຮັບປະກັນຄວາມຖືກຕ້ອງຕາມຫຼັກວິທະຍາສາດສະຖິຕິ ແລະ ເປັນເອກະລາດທາງດ້ານວິຊາການໃນການຜະລິດ, ການເຜີຍແຜ່, ການຕອບສະໜອງຂໍ້ມູນສະຖິຕິກະສິກໍາໃຫ້ຖືກ ຕ້ອງຕາມຄວາມຈິງ, ພາວະວິໄສ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ;

3. ຮັບປະກັນຄວາມເປັນເອກະພາບຂອງບັນດາຕົວຊີ້ບອກ, ລະບອບວິທີການຄິດໄລ່, ລະບົບຕາຕະລາງເກັບກໍາຂໍ້ມູນ, ຫົວໜ່ວຍວັດແທກ, ລະບົບລະຫັດສາລະບານ, ໄລຍະເວລາການລາຍງານ ໂດຍໃຫ້ມີສະຖິຕິແຍກເພດໃນຂະແໜງກະສິກໍາ ແລະ ປ່າໄມ້;

4. ຮັບປະກັນການເປີດເຜີຍວິທີການຜະລິດ ແລະ ການເຜີຍແຜ່ຂໍ້ມູນເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຊົມໃຊ້ຂໍ້ມູນ;

5. ຮັບປະກັນສາຍພົວພັນລະຫວ່າງ ຜູ້ຜະລິດ ແລະ ຜູ້ຊົມໃຊ້ຂໍ້ມູນສະຖິຕິ ໃຫ້ມີສິດສະເໝີພາບໃນການເຂົ້າເຖິງ ແລະ ນໍາໃຊ້ສະຖິຕິກະສິກໍາ ທີ່ໄດ້ເຜີຍແຜ່ ແລະ ປະກາດໃຊ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ຄົວເຮືອນກະສິກຳ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວກິດຈະກຳທີ່ກ່ຽວຂ້ອງກັບການຜະລິດ, ການສະໜອງ ແລະ ການນຳໃຊ້ສະຖິຕິກະສິກຳ ຢູ່ ສປປ ລາວ.

## ໝວດທີ 2
## ການຜະລິດສະຖິຕິກະສິກຳ

**ມາດຕາ 6 ການຜະລິດສະຖິຕິກະສິກຳ**

ການຜະລິດສະຖິຕິກະສິກຳ ແມ່ນການສ້າງສະຖິຕິກະສິກຳ ເພື່ອເປັນເຄື່ອງມືໃນການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນຂອງແຜນພັດທະນາກະສິກຳ ໃນແຕ່ລະໄລຍະ.

**ມາດຕາ 7 ການສຳຫຼວດສະຖິຕິກະສິກຳ**

ການສຳຫຼວດສະຖິຕິກະສິກຳ ແມ່ນຂະບວນການເກັບກຳຂໍ້ມູນ ຫຼື ຕົວເລກ ທີ່ໄດ້ຈາກການສຳພາດຜູ້ສະໜອງຂໍ້ມູນ ແບບທາງກົງ ຫຼື ທາງອ້ອມ ຕາມຫຼັກວິທະຍາສາດສະຖິຕິ.

ການສຳຫຼວດສະຖິຕິກະສິກຳ ປະກອບດ້ວຍການສຳຫຼວດໃຫຍ່, ການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ.

**ມາດຕາ 8 ການລາຍງານບໍລິຫານສະຖິຕິກະສິກຳ**

ການລາຍງານບໍລິຫານສະຖິຕິກະສິກຳ ແມ່ນຂະບວນການເກັບກຳ ແລະ ສັງລວມສະຖິຕິຂອງຂະແໜງກະສິກຳ ແລະ ປ່າໄມ້ ໃນແຕ່ລະຂັ້ນ ເພື່ອລາຍງານຕໍ່ຂັ້ນເທິງຖັດຕົນ ຊຶ່ງປະກອບດ້ວຍ ສະຖິຕິພືດ, ສັດລ້ຽງ, ປະມົງ, ປ່າໄມ້, ຊົນລະປະທານ, ປັດໃຈການຜະລິດ, ລາຄາສິນຄ້າກະສິກຳ ແລະ ອື່ນໆ.

ສຳລັບລາຍການຂໍ້ມູນ ແລະ ວັນເວລາການລາຍງານບໍລິຫານ ໄດ້ກຳນົດໃນເອກະສານຊ້ອນທ້າຍ ຊຶ່ງຖືເປັນສ່ວນໜຶ່ງຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 ການນຳສົ່ງຂໍ້ມູນສະຖິຕິກະສິກຳຈາກການລາຍງານບໍລິຫານ**

ການລາຍງານບໍລິຫານສະຖິຕິກະສິກຳ ຂອງບັນດາກົມ, ສະຖາບັນ ແລະ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ໃນແຕ່ລະຄັ້ງ ຕ້ອງເຮັດເປັນ ສອງ ສະບັບ ເພື່ອລາຍງານ ສູນສະຖິຕິກະສິກຳ ຂອງກົມແຜນການ ແລະ ການຮ່ວມມື ແລະ ສຳເນົາເກັບມ້ຽນເປັນຂອງຕົນ.

## ໝວດທີ 3
## ການຄຸ້ມຄອງ ແລະ ກວດກາ ສະຖິຕິກະສິກຳ

**ມາດຕາ 10 ການຄຸ້ມຄອງສະຖິຕິກະສິກຳ**

ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງສະຖິຕິກະສິກຳ ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກົມແຜນການ ແລະ ການຮ່ວມມື ເປັນໃຈກາງໃນການປະສານສົມທົບຂະແໜງການອື່ນ ຊຶ່ງມີລະບົບສາຍໃຍການຈັດຕັ້ງ ດັ່ງນີ້:

1. **ຂັ້ນສູນກາງ** ແມ່ນກົມແຜນການ ແລະ ການຮ່ວມມື ໂດຍແມ່ນສູນສະຖິຕິກະສິກຳ ເປັນເສນາທິການ;

2. **ຂັ້ນແຂວງ** ແມ່ນ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ໂດຍແມ່ນຂະແໜງແຜນການ ແລະ ການຮ່ວມມື ເປັນເສນາທິການ;

3. **ຂັ້ນເມືອງ** ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ໂດຍແມ່ນໜ່ວຍງານແຜນການ ແລະ ການຮ່ວມມື ເປັນເສນາທິການ;

4. **ຂັ້ນບ້ານ** ແມ່ນໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ.

**ມາດຕາ 11 ສິດ ແລະ ໜ້າທີ່ຂອງ ກົມແຜນການ ແລະ ການຮ່ວມມື**

ໃນການຄຸ້ມຄອງວຽກງານສະຖິຕິກະສິກຳ ກົມແຜນການ ແລະ ການຮ່ວມມື ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ສະຖິຕິ ເພື່ອຈັດຕັ້ງປະຕິບັດ;

2. ເປັນໃຈກາງໃນການອອກແບບ ແລະ ວາງແຜນການສຳຫຼວດໃຫຍ່, ສຳຫຼວດແບບຕົວແທນ ແລະ ເກັບກຳຂໍ້ມູນສະຖິຕິ ທີ່ກ່ຽວຂ້ອງກັບຂະແໜງກະສິກຳ ແລະ ປ່າໄມ້, ພ້ອມທັງສຶກສາ, ວິໄຈ ແລະ ຕີລາຄາ ຂໍ້ມູນດັ່ງກ່າວ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາກະສິກຳ ແລະ ປ່າໄມ້;

3. ເປັນສູນກາງບໍລິການເຜີຍແຜ່ ແລະ ແລກປ່ຽນຂໍ້ມູນຂ່າວສານສະຖິຕິກະສິກຳ, ຂ່າວສານການຕະຫຼາດ ແລະ ເສດຖະກິດ-ສັງຄົມ ທີ່ໄດ້ຮັບການອະນຸມັດຢ່າງເປັນທາງການໃຫ້ພາກສ່ວນລັດ, ເອກະຊົນ, ນັກລົງທຶນ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ;

4. ປະສານສົມທົບກັບບັນດາກົມ, ສະຖາບັນ, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການພັດທະນາ, ວິທີການຜະລິດສະຖິຕິ, ການປຸງແຕ່ງ, ການວິເຄາະ, ວິໄຈ ແລະ ການສົ່ງຂໍ້ມູນຈາກລະບົບການລາຍງານ ແລະ ລະບອບການລາຍງານ ຕາມຫຼັກວິຊາສະຖິຕິໃຫ້ມີຄວາມເປັນເອກະພາບ ແລະ ມີຄຸນນະພາບດ້ວຍການນຳໃຊ້ຄວາມກ້າວໜ້າຂອງເຕັກໂນໂລຊີດ້ານຂໍ້ມູນຂ່າວສານ;

5. ບຳລຸງ, ກໍ່ສ້າງ ແລະ ຍົກລະດັບຄວາມຮູ້ຄວາມຊຳນານງານ ດ້ານສະຖິຕິໃຫ້ແກ່ພະນັກງານເຮັດວຽກສະຖິຕິ ຢູ່ຂັ້ນກະຊວງ, ແຂວງ, ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ດ້ວຍຫຼາຍຮູບແບບ;

6. ຂົນຂວາຍຍາດແຍ່ງການຊ່ວຍເຫຼືອ ແລະ ຮ່ວມມືຮອບດ້ານໃນທຸກຂົງເຂດວຽກງານທີ່ກ່ຽວຂ້ອງກັບຂະແໜງສະຖິຕິກະສິກຳໃນຂອບເຂດທົ່ວປະເທດ;

7. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງ, ຄຸ້ມຄອງລະບົບຖານຂໍ້ມູນ ແລະ ສະໜອງຂໍ້ມູນສະຖິຕິກະສິກຳ ໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງກົມ, ສະຖາບັນອ້ອມຂ້າງກະຊວງ**

ໃນການຄຸ້ມຄອງວຽກງານສະຖິຕິກະສິກຳ ບັນດາ ກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ໃຫ້ເປັນນິຕິກຳລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ;

2. ເປັນເຈົ້າການປະສານສົມທົບກັບຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ເພື່ອເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນ ການຜະລິດກະສິກຳ ແລະ ປ່າໄມ້ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ທັນຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

3. ເຂົ້າຮ່ວມດຳເນີນການສຳຫຼວດແບບຕົວແທນ ແລະ ການສຳຫຼວດໃຫຍ່ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສະຖິຕິກະສິກຳ ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ໃຫ້ເປັນນິຕິກຳລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ;

2. ເປັນເຈົ້າການປະສານສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ເພື່ອເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນການຜະລິດກະສິກຳ ແລະ ປ່າໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ທັນຕາມກຳນົດເວລາທີ່ໄດ້ ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

3. ເຂົ້າຮ່ວມດຳເນີນການສຳຫຼວດແບບຕົວແທນ ແລະ ການສຳຫຼວດໃຫຍ່ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ**

ໃນການຄຸ້ມຄອງວຽກງານສະຖິຕິກະສິກຳ ແລະ ປ່າໄມ້ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບ ບ້ານ, ກຸ່ມບ້ານ ເພື່ອເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນການ ຜະລິດກະສິກຳ ແລະ ປ່າໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ທັນຕາມກຳນົດເວລາທີ່ໄດ້ ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

2. ເຂົ້າຮ່ວມດຳເນີນການສຳຫຼວດແບບຕົວແທນ ແລະ ການສຳຫຼວດໃຫຍ່ ຕາມພາລະບົດບາດ ແລະ ໜ້າທີ່ຄວາມ ຮັບຜິດຊອບຂອງຕົນ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງ ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ**

ໃນການຄຸ້ມຄອງວຽກງານສະຖິຕິກະສິກຳ ແລະ ປ່າໄມ້ ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳ ແລະ ສັງລວມສະຖິຕິກະສິກຳ ຈາກບັນດາຄົວເຮືອນພາຍໃນຂອບເຂດບ້ານຂອງຕົນ ເພື່ອສະໜອງຂໍ້ມູນໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ;

2. ເຂົ້າຮ່ວມດຳເນີນການສຳຫຼວດແບບຕົວແທນ ແລະ ການສຳຫຼວດໃຫຍ່ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 16 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ເຮັດບົດລາຍງານ**

ຜູ້ເຮັດບົດລາຍງານ ແມ່ນພະນັກງານ ຫຼື ບຸກຄົນ ທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຄຸ້ມຄອງວຽກງານ ສະຖິຕິກະສິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ເຊິ່ງມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ເກັບກຳ, ສັງລວມ, ວິເຄາະ, ວິໄຈຂໍ້ມູນ ຈາກພາກສ່ວນທີ່ກ່ຽວຂ້ອງພາຍໃນຄວາມຮັບຜິດຊອບຂອງຕົນ ພ້ອມທັງອະທິບາຍເຫດຜົນທີ່ກະທົບຕໍ່ກັບການເພີ່ມຂຶ້ນ ຫຼື ຫຼຸດລົງຂອງຂໍ້ມູນ ຫຼື ຕົວເລກທີ່ໄດ້ກຳນົດໄວ້ໃນແຜນການ;

2. ການລາຍງານສະຖິຕິການຜະລິດກະສິກຳ ຕ້ອງຮັບປະກັນຄວາມຖືກຕ້ອງ, ທັນເວລາ, ຄົບຖ້ວນ ແລະ ຊັດເຈນ;

3. ການລາຍງານແຕ່ລະເທື່ອຕ້ອງມີຄວາມເປັນເອກະພາບກັບທຸກຂະແໜງການທີ່ກ່ຽວຂ້ອງ ແລະ ມີການຢັ້ງຢືນຈາກຫົວໜ້າການຈັດຕັ້ງ ທີ່ຕົນຂຶ້ນກັບ;

4. ໂຄສະນາເຜີຍແຜ່, ແນະນຳ ລະບຽບກົດໝາຍກ່ຽວກັບສະຖິຕິ ໃຫ້ແກ່ທຸກຂະແໜງການກ່ຽວຂ້ອງ ໃນຂັ້ນຂອງຕົນ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ;

5. ໃນກໍລະນີມີການສຳຫຼວດກ່ຽວກັບສະຖິຕິກະສິກຳ ຕ້ອງເປັນເຈົ້າການປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ຕາມລະບຽບກົດໝາຍກ່ຽວກັບສະຖິຕິ;

6. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍກ່ຽວກັບສະຖິຕິ.

**ມາດຕາ 17 ການກວດກາສະຖິຕິກະສິກຳ**

ການກວດກາສະຖິຕິກະສິກຳ ແມ່ນການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງ ປະຕິບັດວຽກງານສະຖິຕິກະສິກຳ ຊຶ່ງປະກອບດ້ວຍ ການກວດກາປົກກະຕິ, ການກວດກາໂດຍ ມີການແຈ້ງລ່ວງໜ້າ ແລະ ການກວດກາແບບກະທັນຫັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ.

ອົງການກວດກາສະຖິຕິກະສິກຳ ແມ່ນອົງການດຽວກັນກັບອົງການຄຸ້ມຄອງສະຖິຕິກະສິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການຈັດພິມ ແລະ ເຜີຍແຜ່ສະຖິຕິກະສິກຳ

**ມາດຕາ 18 ການຈັດພິມວາລະສານສະຖິຕິກະສິກຳ**

ວາລະສານສະຖິຕິກະສິກຳ ແມ່ນເອກະສານທາງການ ທີ່ຈັດພິມເຜີຍແຜ່ ປະຈຳປີ, 5 ປີ, 10 ປີ ແລະ ອື່ນໆ ຊຶ່ງແມ່ນໜ້າທີ່ຂອງ ກົມແຜນການ ແລະ ການຮ່ວມມື ໂດຍແມ່ນສູນສະຖິຕິກະສິກຳ ເປັນເສນາທິການ.

ບັນດາກົມ, ສະຖາບັນ ແລະ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ ສາມາດຈັດພິມປຶ້ມວາລະສານສະຖິຕິກະສິກຳ ທີ່ເປັນຂໍ້ມູນສະເພາະດ້ານ ແລະ ຢູ່ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 19 ການເຜີຍແຜ່ສະຖິຕິກະສິກຳ**

ບັນດາຫົວໜ່ວຍລາຍງານ ມີສິດເຜີຍແຜ່ ແລະ ສະໜອງຂໍ້ມູນທີ່ໄດ້ຮັບການອະນຸມັດຢ່າງເປັນທາງການຈາກຂັ້ນສູນກາງ ໃຫ້ແກ່ພາກສ່ວນຂອງລັດ, ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ບົນພື້ນ ຖານການຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນຂອງຂໍ້ມູນ ໂດຍມີສຳເນົາຕິດຕາມທຸກຄັ້ງ ເພື່ອຫຼີກລ້ຽງໃຫ້ຂໍ້ມູນຊໍ້າຊ້ອນ ແລະ ບໍ່ຄືກັນ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ລາຍງານຂໍ້ມູນສະຖິຕິທີ່ບໍ່ມີຄວາມຈິງ;

2. ເຜີຍແຜ່ ແລະ ສະໜອງຂໍ້ມູນທີ່ບໍ່ແມ່ນຄວາມຮັບຜິດຊອບຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

3. ປອມແປງ, ບິດເບືອນຂໍ້ມູນສະຖິຕິທາງການ ແລະ ຂໍ້ມູນສະເພາະບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍເຈດຕະນາ;

4. ນຳໃຊ້ຂໍ້ມູນສະຖິຕິ ເພື່ອຈຸດປະສົງອື່ນ ທີ່ບໍ່ແມ່ນສະຖິຕິ ຫຼືນຳໃຊ້ເພື່ອສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ;

5. ນຳໃຊ້ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງໃດໜຶ່ງໃນການທີ່ບໍ່ຖືກຕ້ອງ ແລະ ເພື່ອຈຸດປະສົງອື່ນທີ່ບໍ່ແມ່ນສະຖິຕິ;

6. ສະໜອງຖານຂໍ້ມູນດິບ ຈາກການສຳຫຼວດ ທີ່ໄດ້ມາຈາກການຈັດຕັ້ງສະຖິຕິທຸກລະບົບໃຫ້ບຸກຄົນທີ່ສາມ ເພື່ອຈຸດປະສົງອື່ນ;

7. ບັງຄັບບຸກຄົນໃດໜຶ່ງໃຫ້ເປີດເຜີຍ, ລາຍງານ ແລະ ປະກາດໃຊ້ຂໍ້ມູນທີ່ຜິດກັບຄວາມເປັນຈິງ;

8. ມີການກະທຳອື່ນທີ່ເປັນການລະເມີດກົດໝາຍ.

**ມາດຕາ 21 ຂໍ້ຫ້າມສຳລັບພະນັກງານສະຖິຕິກະສິກຳ**

ຫ້າມພະນັກງານສະຖິຕິກະສິກຳ ມີພຶດຕິກຳດັ່ງນີ້:

1. ເປີດເຜີຍ, ເຜີຍແຜ່ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງຕາມທີ່ໄດ້ກຳນົດໃນ ມາດຕາ 24 ຂອງກົດໝາຍສະຖິຕິ ຍົກເວັ້ນກໍລະນີໄດ້ຮັບການເຫັນດີຂອງພາກສ່ວນທີ່ກ່ຽວຂ້ອງ;

2. ລາຍງານຂໍ້ມູນສະຖິຕິກະສິກຳ ແລະ ປ່າໄມ້ທີ່ບໍ່ມີຄວາມຈິງ;

3. ເຜີຍແຜ່ ແລະ ສະໜອງຂໍ້ມູນທີ່ບໍ່ແມ່ນຄວາມຮັບຜິດຊອບຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກ ສ່ວນທີ່ກ່ຽວຂ້ອງ;

4. ນຳໃຊ້ຂໍ້ມູນສະຖິຕິ ແລະ ຈຸດປະສົງອື່ນທີ່ບໍ່ແມ່ນສະຖິຕິ, ນຳໃຊ້ທີ່ມີຈຸດປະສົງສ້າງຄວາມເສຍຫາຍໃຫ້ ແກ່ຜູ້ອື່ນ;

5. ສະໜອງຖານຂໍ້ມູນດິບ ຈາກການສຳຫຼວດ ທີ່ໄດ້ມາຈາກການຈັດຕັ້ງສະຖິຕິທຸກລະບົບໃຫ້ບຸກຄົນທີ່ສາມ ເພື່ອຈຸດປະສົງອື່ນ;

6. ປອມແປງ, ບິດເບືອນຂໍ້ມູນສະຖິຕິທາງການ ແລະ ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການ ຈັດຕັ້ງເພື່ອຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍແກ່ຜູ້ອື່ນໂດຍເຈດຕະນາ;

7. ນຳໃຊ້ຂໍ້ມູນສະຖິຕິ ແລະ ບົດລາຍງານທີ່ໄດ້ຮັບຈາກບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ ສປປລາວ ເພື່ອໃຊ້ເປັນບ່ອນອີງໃນການກວດກາ ແລະ ການກວດສອບ ການເຄື່ອນໄຫວທຸລະກິດ ຫຼື ເພື່ອການຄິດໄລ່ ໃນການເກັບພາສີອາກອນ;

8. ລະເມີດຈັນຍາບັນທາງດ້ານສະຖິຕິ ຂອງພະນັກງານ ແລະ ບຸກຄົນທີ່ໄດ້ຮັບການມອບໝາຍໃຫ້ປະຕິ ບັດວຽກງານສະຖິຕິ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດວຽກງານສະຖິຕິກະສິກຳ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 23 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນແມ່ນການລາຍງານ ບໍ່ຖືກກັບ ຄວາມຈິງ, ການລາຍງານຊັກຊ້າ, ເຜີຍແຜ່ ຫຼື ສະໜອງຂໍ້ມູນສະຖິຕິກະສິກຳໂດຍບໍ່ໄດ້ຮັບອະນຸຍາດ, ນຳໃຊ້ຂໍ້ມູນ

ເພື່ອສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ແລະ ມີການກະທຳອື່ນທີ່ຜິດລະບຽບກົດໝາຍກ່ຽວກັບສະຖິຕິ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 24 ການຈັດຕັ້ງປະຕິບັດ

ກົມແຜນການ ແລະ ການຮ່ວມມື ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງທັງຂັ້ນ ສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

### ມາດຕາ 25 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດຂອງ ກະຊວງກະສິກຳ ແລະ ປ່າໄມ້ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້**

ດຣ. ຕິ ພົມມະສັກ

ເອກະສານຊ້ອນທ້າຍ

(ຕາມມາດຕາ 8 ຂອງຂໍ້ຕົກລົງ ລັດຖະມົນຕີ ວ່າດ້ວຍການຜະລິດ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກຳ)

## ຕາຕະລາງ 1: ລາຍການຂໍ້ມູນ ເພື່ອຈັດພິມວາລະສານສະຖິຕິກະສິກຳປະຈຳປີ

| ລຳດັບ | ລາຍການຂໍ້ມູນ | ເນື້ອທີ່ປູກ (ເຮັກຕາ) | ເນື້ອທີ່ເກັບກ່ຽວ (ເຮັກຕາ) | ຜະລິດຕະພາບ (ໂຕນ/ເຮັກຕາ) | ຜົນຜະລິດ (ໂຕນ) |
|---|---|---|---|---|---|
| I | ລາຍການພືດ | | | | |
| 01 | ເຂົ້ານາປີ | | | | |
| 02 | ເຂົ້ານາແຊງ | | | | |
| 03 | ເຂົ້າໄຮ່ລວມ | | | | |
| 04 | ສາລີແຂງ | | | | |
| 05 | ສາລີຫວານ | | | | |
| 06 | ຖົ່ວເຫລືອງ | | | | |
| 07 | ຖົ່ວຂຽວ | | | | |
| 08 | ຖົ່ວດິນ | | | | |
| 09 | ຖົ່ວດຳ + ຖົ່ວແດງ | | | | |
| 10 | ມັນຕົ້ນ | | | | |
| 11 | ມັນດ້າງ | | | | |
| 12 | ມັນຝຣັ່ງ | | | | |
| 13 | ມັນເຜົາ | | | | |
| 14 | ເຜືອກ | | | | |
| 15 | ກາເຟ | | | | |
| 16 | ຊາ | | | | |
| 17 | ໝາກງາ | | | | |
| 18 | ໝາກແໜ່ງ | | | | |
| 19 | ໝາກເດືອຍ | | | | |
| 20 | ຢາສູບ | | | | |
| 21 | ຝ້າຍ | | | | |
| 22 | ອ້ອຍ | | | | |
| 23 | ຜັກກິນໃບ | | | | |
| 24 | ຜັກກິນຫົວ | | | | |
| 25 | ຜັກກິນໝາກ | | | | |
| 26 | ໄມ້ກິນໝາກຢືນຕົ້ນ | | | | |
| 27 | ໝາກກ້ວຍ | | | | |
| 28 | ໝາກນັດ | | | | |
| 29 | ໝາກຫຸ່ງ | | | | |
| 30 | ໝາກໂມ | | | | |
| 31 | ໝາກນາວ | | | | |
| 32 | ໝາກແຕງລາຍ+ຫວານ | | | | |
| 33 | ອື່ນໆ ລະບຸແຈ້ງ | | | | |

| ລຳດັບ | ລາຍການຂໍ້ມູນ | ຫົວໜ່ວຍ | ຈຳນວນ |
|---|---|---|---|
| II | **ສັດລ້ຽງ ແລະ ປະມົງ** | | |
| 01 | ຄວາຍ | ໂຕ | |
| 02 | ງົວ | ໂຕ | |
| 03 | ໝູ | ໂຕ | |
| 04 | ແບ້ ແລະ ແກະ | ໂຕ | |
| 05 | ສັດປີ | ໂຕ | |
| 06 | ຜົນຜະລິດຊີ້ນປາທຳມະຊາດ | ໂຕນ | |
| 07 | ຜົນຜະລິດຊີ້ນປາລ້ຽງ | ໂຕນ | |
| 08 | ອື່ນໆ | | |
| III | **ຊົນລະປະທານ** | **ຫົວໜ່ວຍ** | **ຈຳນວນ** |
| 01 | ເນື້ອທີ່ຮັບນ້ຳຊົນລະປະທານລວມ | ເຮັກຕາ | |
| 02 | ເນື້ອທີ່ຮັບນ້ຳຊົນລະປະທານລະດູຝົນ | ເຮັກຕາ | |
| 03 | ເນື້ອທີ່ຮັບນ້ຳຊົນລະປະທານລະດູແລ້ງ | ເຮັກຕາ | |
| 04 | ເນື້ອທີ່ຮັບນ້ຳຂອງຝາຍນ້ຳລົ້ນ | ເຮັກຕາ | |
| 05 | ຈຳນວນຝາຍນ້ຳລົ້ນ | ແຫ່ງ | |
| 06 | ເນື້ອທີ່ຮັບນ້ຳຂອງອ່າງເກັບນ້ຳ | ເຮັກຕາ | |
| 07 | ຈຳນວນອ່າງເກັບນ້ຳ | ແຫ່ງ | |
| 50 | ເນື້ອທີ່ຮັບນ້ຳຂອງຈັກສູບນ້ຳ | ເຮັກຕາ | |
| 08 | ຈຳນວນຈັກສູບນ້ຳ | ແຫ່ງ | |
| 09 | ເນື້ອທີ່ຮັບນ້ຳຂອງປະຕູນ້ຳ ແລະ ຄູກັນນ້ຳ | ເຮັກຕາ | |
| 10 | ຈຳນວນປະຕູນ້ຳ ແລະ ຄູກັນນ້ຳ | ແຫ່ງ | |
| 11 | ເນື້ອທີ່ຮັບນ້ຳຂອງຝາຍປະຖົມປະຖານ | ເຮັກຕາ | |
| 12 | ຈຳນວນຝາຍປະຖົມປະຖານ | ແຫ່ງ | |
| 13 | ເນື້ອທີ່ສະໜອງນ້ຳຂອງຝາຍກວຍຫີນ | ເຮັກຕາ | |
| 14 | ຈຳນວນຝາຍກວຍຫີນ | ແຫ່ງ | |
| IV | **ປ່າໄມ້** | **ຫົວໜ່ວຍ** | **ຈຳນວນ** |
| 1 | ເກັບແກ່ນໄມ້ | ກິໂລ | |
| 2 | ກ້າເບ້ຍໄມ້ | ເບ້ຍ | |
| 3 | ການປູກໄມ້ | ເຮັກຕາ | |
| 4 | ການຟື້ນຟູປ່າ ປະຈຳປີ | ເຮັກຕາ | |
| 5 | ປໍສາ | ເຮັກຕາ | |

ຕາຕະລາງ 2: ກໍານົດເວລາ ຂອງການລາຍງານບໍລິຫານສະຖິຕິກະສິກໍາໃຫ້ປະຕິບັດ

| ລ/ດ | ຕົວຊີ້ບອກ | ກໍານົດເວລາ ຂອງການລາຍງານ | | | | | | |
|---|---|---|---|---|---|---|---|---|
| | | ທີມໜ່ວຍພື້ນຖານ (ຄົວເຮືອນ) | ໜ່ວຍງານ ກປ ບ້ານ | ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ | ພະແນກ ກປ ແຂວງ, ນະຄອນຫລວງ | ຫ້ອງການ, ກົມ, ສະຖາບັນອ້ອມຂ້າງກະຊວງ | ສູນສະຖິຕິກະສິກໍາ, ກພຣ | ສູນສະຖິຕິແຫ່ງຊາດ |
| I | ກໍານົດເວລາ ການລາຍງານຂໍ້ມູນວາລະສານສະຖິຕິກະສິກໍາ ປະຈໍາປີ | | | | | | | |
| 1 | **ລະດູແລ້ງ** | | | | | | | |
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | 15 ກຸມພາ | 25 ກຸມພາ | 28 ກຸມພາ | 5 ມີນາ | 15 ມີນາ | 5 ເມສາ | 20 ມິຖຸນາ |
| | ການລາຍງານຕົວເລກການຈັດຕັ້ງປະຕິບັດຂາດຕົວ | 5 ພຶດສະພາ | 15 ພຶດສະພາ | 25 ພຶດສະພາ | 5 ມິຖຸນາ | 15 ມິຖຸນາ | 25 ມິຖຸນາ | 10 ກໍລະກົດ |
| 2 | **ລະດູຝົນ** | | | | | | | |
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | 25 ກັນຍາ | 1 ຕຸລາ | 10 ຕຸລາ | 20 ຕຸລາ | 30 ຕຸລາ | 1 ມັງກອນ | 20 ກຸມພາ |
| | ການລາຍງານຕົວເລກການຈັດຕັ້ງປະຕິບັດຂາດຕົວ | 1 ພະຈິກ | 10 ພະຈິກ | 20 ພະຈິກ | 1 ທັນວາ | 10 ທັນວາ | 10 ມີນາ | 20 ມີນາ |
| 3 | **ປະຈໍາປີ** | | | | | | | |
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | 25 ມັງກອນ | 1 ກຸມພາ | 5 ກຸມພາ | 10 ກຸມພາ | 15 ທັນວາ | 20 ກຸມພາ | 20 ກຸມພາ |
| | ການລາຍງານຕົວເລກການຈັດຕັ້ງປະຕິບັດຂາດຕົວ | 15 ກຸມພາ | 15 ກຸມພາ | 20 ກຸມພາ | 25 ກຸມພາ | 25 ທັນວາ | 15 ມີນາ | 20 ມີນາ |
| II | ກໍານົດເວລາ ການລາຍງານຂໍ້ມູນ ເພື່ອຄິດໄລ່ລວມຍອດຜະລິດຕະພັນພາຍໃນ (GDP) ຂອງຂະແໜງການ ກປ | | | | | | | |
| 1 | **6 ເດືອນຕົ້ນປີ ງົບປະມານ** | | | | | | | |
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | 15 ມີນາ | 25 ມີນາ | 1 ເມສາ | 5 ເມສາ | 10 ເມສາ | 15 ເມສາ | 20 ເມສາ |

| | | | | | | | | |
|---|---|---|---|---|---|---|---|---|
| | ສະຫຼູບການຈັດຕັ້ງປະຕິບັດ ຂາດຕົວ | 15 ມິຖຸນາ | 15 ມິຖຸນາ | 20 ມິຖຸນາ | 25 ມິຖຸນາ | 30 ມິຖຸນາ | 5 ກໍລະກົດ | 10 ກໍລະກົດ |
| 2 | **6 ເດືອນທ້າຍ ປີງົບປະມານ** | | | | | | | |
| | ການລາຍງານຕົວເລກຄາດ ຄະເນປະຕິບັດເບື້ອງຕົ້ນ | 20 ສິງຫາ | 25 ສິງຫາ | 1 ກັນຍາ | 5 ກັນຍາ | 10 ກັນຍາ | 15 ກັນຍາ | 20 ກັນຍາ |
| | ສະຫຼູບການຈັດຕັ້ງປະຕິບັດ ຂາດຕົວ | 10 ຕຸລາ | 15 ຕຸລາ | 20 ຕຸລາ | 25 ຕຸລາ | 1 ພະຈິກ | 5 ພະຈິກ | 10 ພະຈິກ |
| 3 | **6 ເດືອນຕົ້ນປີ ປະຕິທິນ** | | | | | | | |
| | ການລາຍງານຕົວເລກຄາດ ຄະເນປະຕິບັດເບື້ອງຕົ້ນ | 15 ກໍລະກົດ | 20 ກໍລະກົດ | 25 ກໍລະກົດ | 1 ມິຖຸນາ | 5 ມິຖຸນາ | 10 ມິຖຸນາ | 15 ມິຖຸນາ |
| | ສະຫຼູບການຈັດຕັ້ງປະຕິບັດ ຂາດຕົວ | 10 ກໍລະກົດ | 25 ກໍລະກົດ | 1 ສິງຫາ | 5 ສິງຫາ | 10 ສິງຫາ | 15 ສິງຫາ | 20 ສິງຫາ |
| 4 | **6 ເດືອນທ້າຍປີປະຕິທິນ** | | | | | | | |
| | ການລາຍງານຕົວເລກຄາດ ຄະເນປະຕິບັດເບື້ອງຕົ້ນ | 15 ທັນວາ | 20 ທັນວາ | 25 ທັນວາ | 1 ມັງກອນ | 5 ມັງກອນ | 10 ມັງກອນ | 15 ມັງກອນ |
| | ສະຫຼູບການຈັດຕັ້ງປະຕິບັດ ຂາດຕົວ | 10 ກຸມພາ | 15 ກຸມພາ | 20 ກຸມພາ | 25 ກຸມພາ | 1 ມີນາ | 5 ມີນາ | 10 ມີນາ |
| III | **ກຳນົດເວລາ ການລາຍງານຂໍ້ມູນ ຂອງຂະແໜງກະສິກຳ ແລະ ປ່າໄມ້** | | | | | | | |
| 1 | **ປະຈຳອາທິດ** | ການຈັດຕັ້ງສະຖິຕິກະສິກຳແລະ ປ່າໄມ້ ຕ້ອງກຳນົດເວລາການລາຍງານສະເພາະ ຕາມຄວາມຕ້ອງການຂອງແຕ່ລະຂັ້ນ ເປັນຜູ້ກຳນົດວັນເວລາລາຍງານ | | | | | | |
| 2 | **ປະຈຳເດືອນ** | | | | | | | |
| | ການລາຍງານຕົວເລກຄາດ ຄະເນປະຕິບັດເບື້ອງຕົ້ນ | | | 5 ຂອງເດືອນ | 10 ຂອງເດືອນ | 15 ຂອງເດືອນ | 20 ຂອງເດືອນ | 20 ຂອງເດືອນ |
| | ການລາຍງານຕົວເລກການ ຈັດຕັ້ງປະຕິບັດຂາດຕົວ | 10 ຂອງເດືອນ ຖັດມາ | 15 ຂອງເດືອນ ຖັດມາ | 20 ຂອງເດືອນ ຖັດມາ | 25 ຂອງເດືອນ ຖັດມາ | 30 ຂອງເດືອນ ຖັດມາ | 5 ຂອງເດືອນ ທີສອງຖັດມາ | 10 ຂອງເດືອນ ທີສອງຖັດມາ |
| 3 | **ປະຈຳໄຕມາດ** | | | | | | | |

| | | | | | | | | |
|---|---|---|---|---|---|---|---|---|
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | 25 ຂອງເດືອນສຸດທ້າຍໃນງວດຖັດມາ | 1 ຂອງເດືອນທຳອິດໃນງວດຖັດມາ | 5 ຂອງເດືອນທຳອິດໃນງວດຖັດມາ | 10 ຂອງເດືອນທຳອິດໃນງວດຖັດມາ | 15 ຂອງເດືອນ ທຳອິດໃນງວດຖັດມາ | 20 ຂອງເດືອນທຳອິດໃນງວດ ຖັດມາ | 20 ຂອງເດືອນທຳອິດໃນງວດຖັດມາ |
| | ການລາຍງານຕົວເລກການຈັດຕັ້ງປະຕິບັດຂາດຕົວ | 15 ຂອງເດືອນທຳອິດໃນງວດຖັດມາ | 15 ຂອງເດືອນທຳອິດໃນງວດຖັດມາ | 20 ຂອງເດືອນທຳອິດໃນງວດຖັດມາ | 25 ຂອງເດືອນທຳ ອິດໃນງວດຖັດມາ | 30 ຂອງເດືອນທຳ ອິດໃນງວດຖັດມາ | 5 ຂອງເດືອນທຳ ອິດໃນງວດຖັດມາ | 5 ຂອງເດືອນທຳອິດໃນງວດຖັດມາ |
| 4 | **ປະຈຳ 6 ເດືອນຕົ້ນປີ** | | | | | | | |
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | 25 ຂອງເດືອນສຸດທ້າຍໃນງວດຖັດມາ | 1 ຂອງເດືອນທຳອິດໃນງວດຖັດມາ | 5 ຂອງເດືອນທຳອິດໃນງວດຖັດມາ | 10 ຂອງເດືອນ ທຳອິດໃນງວດ ຖັດມາ | 15 ຂອງເດືອນ ທຳອິດໃນງວດຖັດມາ | 20 ຂອງເດືອນທຳອິດໃນງວດຖັດມາ | 20 ຂອງເດືອນທຳອິດໃນງວດຖັດມາ |
| | ການລາຍງານຕົວເລກການຈັດຕັ້ງປະຕິບັດຂາດຕົວ | 15 ຂອງເດືອນຖັດມາ | 15 ຂອງເດືອນຖັດມາ | 20 ຂອງເດືອນຖັດມາ | 25 ຂອງເດືອນ ຖັດມາ | 30 ຂອງເດືອນຖັດມາ | 5 ຂອງເດືອນ ຖັດມາ | 10 ຂອງເດືອນຖັດມາ |
| 5 | **ປະຈຳ 6 ເດືອນທ້າຍປີ** | | | | | | | |
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | 25 ຂອງເດືອນສຸດທ້າຍໃນງວດຖັດມາ | 1 ຂອງເດືອນທຳອິດໃນງວດຖັດມາ | 5 ຂອງ ເດືອນທຳອິດໃນງວດຖັດມາ | 10 ຂອງເດືອນທຳອິດໃນງວດ ຖັດມາ | 15 ຂອງເດືອນທຳອິດໃນ ງວດຖັດມາ | 20 ຂອງ ເດືອນທຳອິດໃນງວດຖັດມາ | 20 ຂອງເດືອນ ທຳອິດໃນງວດຖັດມາ |
| | ການລາຍງານຕົວເລກການຈັດຕັ້ງປະຕິບັດຂາດຕົວ | 15 ຂອງເດືອນຖັດມາ | 15 ຂອງເດືອນ ຖັດມາ | 20 ຂອງເດືອນຖັດມາ | 25 ຂອງເດືອນຖັດມາ | 30 ຂອງເດືອນຖັດມາ | 5 ຂອງເດືອນ ຖັດມາ | 10 ຂອງເດືອນຖັດມາ |
| 6 | **ປະຈຳປີ** | | | | | | | |
| | ການລາຍງານຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ | | 1 ມັງກອນປີຖັດມາ | 5 ມັງກອນປີຖັດມາ | 10 ມັງກອນ ປີຖັດມາ | 15 ມັງກອນປີຖັດມາ | 20 ມັງກອນປີຖັດມາ | 20 ມັງກອນປີຖັດມາ |
| | ການລາຍງານຕົວເລກການຈັດຕັ້ງປະຕິບັດຂາດຕົວ | 15 ມັງກອນປີຖັດມາ | 15 ມັງກອນປີຖັດມາ | 20 ມັງກອນປີຖັດມາ | 25 ມັງກອນປີຖັດມາ | 15 ມັງກອນປີຖັດມາ | 20 ມັງກອນປີຖັດມາ | 25 ຂອງເດືອນທຳອິດໃນງວດຖັດມາ |